# ບົດທີ 11

# ພະເຢຊູຖືກທົດລອງໃນສະພາບເປັນພະເຈົ້າ



ໃນບົດຮຽນນີ້ ແລະອີກບົດຮຽນຕໍ່ໄປເຮົາຈະຮຽນເລື່ອງມານທົດລອງພະເຢຊູ. ພະເຢຊູ ຊຶ່ງຖືກການທົດລອງໃນສະພາບເປັນມະນຸດແລະໃນສະພາບເປັນພະເຈົ້າ. ໃນບົດນີ້ຈະຮຽນເລື່ອງການທົດລອງໃນສະພາບເປັນ ພະເຈົ້າ ກ່ອນ.

ໃຫ້ທ່ານຮັບພິຈາລະນາເຖິງຄຳຖາມ 4 ປະການນີ້.

1. ພະເຢຊູຖືກການທົດລອງມາສາມເທື່ອ ແມ່ນເທື່ອໃດໃນສະພາບເປັນພະເຈົ້າ?
2. ມານຈະໃຫ້ພະເຢຊູ ໃຊ້ອຳນາດຂອງພະເຈົ້າເພື່ອປະໂຫຍດສ່ວນຕົວຢ່າງໃດ?
3. ມີໂອກາດອື່ນໆ ທີ່ມານທົດລອງໃຫ້ພະອົງໃຊ້ອຳນາດຂອງພະເຈົ້າເພື່ອປະໂຫຍດສ່ວນຕົວບໍ່?
4. ພະເຢຊູມີສະພາບມະນຸດແລະສະພາບຂອງພະເຈົ້າໃນບຸກຄົນດຽວ ການທົດລອງກ່ຽວຂ້ອງກັບເລື່ອງນັ້ນຢ່າງໃດ?

**1** ພະທຳ ມັດທາຍ ກ່າວເລື່ອງເຫດການ 3 ປະການໃນສະໄໝປີທີ່ພະເຢຊູຕຽມຕົວ. ໃຫ້ທ່ານຈົດ 3 ປະການນັ້ນໄວ້ ພ້ອມດ້ວຍບົດແລະຂໍ້ໃນພະທຳ ມັດທາຍ (ເປີດເບິ່ງໃນພະຄຳພີກໍ່ໄດ້)

_______________________________________________ ມທ _______ ເຖິງ _______

_______________________________________________ ມທ _______ ເຖິງ _______

_______________________________________________ ມທ _______ ເຖິງ _______

| | |
|---|---|
| ຝຶກ: | ໃນບົດຮຽນນີ້ ທ່ານຈະຮຽນເລື່ອງເຫດການທີ 3 ເພາະສະນັ້ນໃຫ້ອ່ານເລື່ອງນັ້ນໃນ ມທ 4:1-11 |

*ຖ້າວ່າອ່ານແລ້ວ ໃຫ້ຕອບຄຳຖາມຕໍ່ໄປກໍໄດ້ ແຕ່ຖ້າຍັງບໍ່ໄດ້ອ່ານຈົ່ງຢຸດກ່ອນ ແລ້ວກັບໄປອ່ານ!*

**2** ໃນບົດຮຽນນີ້ແລະອີກບົດຮຽນຂ້າງໜ້ານັ້ນ ເຮົາຈະຮຽນເລື່ອງເຫດການທີ 3 ໃນສະໄໝປີທີ່ພະເຢຊູຕຽມຕົວຄື ການ ທົດລອງຂອງພະເຢຊູ. ພະຍາມານພາພະເຢຊູໄປຮັບການທົດລອງໃນ 3 ບ່ອນຄື: ຫຼັງຄາພະວິຫານ, ພູສູງ ແລະ ປ່າ. (ແຕ່ລຽງບໍ່ຖືກຕາມລະດັບ) ໃຫ້ທ່ານຂຽນ 3 ບ່ອນນັ້ນໄວ້ອີກຕາມລະບຽບໃນ ມທ 4:1-11

ກ. _____________________________________________________________

ຂ. _____________________________________________________________

ຄ. _____________________________________________________________

**3** ທ່ານຈື່ເລື່ອງທີ່ພະເຢຊູຮັບບັບຕິສະມາບໍ່, ຫຼັງຈາກພະອົງຮັບບັບຕິສະມາແລ້ວ ມີພະສຸລະສຽງຂອງພະເຈົ້າລົງມາ. (ອ່ານ ມທ 3:17) ພະສຸລະສຽງນັ້ນບອກວ່າ ພະເຢຊູເປັນພະບຸດຂອງໃຜ?

_________________________________________________________________

**4** ຫຼັງຈາກປະກາດວ່າ ພະເຢຊູເປັນພະບຸດຂອງພະເຈົ້າແລ້ວ ພະຍາມານມາທົດລອງພະອົງໃນສະພາບເປັນພະເຈົ້າມີ ສອງເທື່ອທີ່ມານບອກວ່າ "ຖ້າທ່ານເປັນພະບຸດຂອງພະເຈົ້າ ຈິ່ງ..." ພະຍາມານທົດລອງພະເຢຊູໃນສະພາບເປັນພະເຈົ້າ ໃນສອງບ່ອນໃດ?
(ຈົ່ງເລືອກເອົາຂໍ້ທີ່ຖືກ)

_______ ປ່າ _______ ຫຼັງຄາພະວິຫານ _______ ພູສູງ

ຕອບ:

**1** *ການປະກາດຂອງໂຢຮັນບັບຕິສະໂຕ ມທ 3:1ເຖິງ 12*
*ພະເຢຊູຊົງຮັບບັບຕິສະມາ ມທ 3:13 ເຖິງ 17*
*ມານທົດລອງພະເຢຊູ ມທ 4:1 ເຖິງ 11*

**2** *ກ. ປ່າ ຂ. ຫຼັງຄາພະວິຫານ ຄ. ພູສູງ*

**3** *ພະເຈົ້າ*

**4** *ປ່າ ແລະ ຫຼັງຄາພະວິຫານ*

**5** ເລື່ອງທີ່ພະເຢຊູຖືກການທົດລອງໃນປ່າ ເຫັນໃນ ມທ 4:1-4

ກ. ພະອົງອົດອາຫານຈັກມື້? ______________________________

ຂ. ພະຍາມານຈະໃຫ້ມີອາຫານຢ່າງໃດ? ______________________________

ຄ. ພະບຸດຂອງພະເຈົ້າສາມາດເຮັດໄດ້ບໍ່? ______________________________

ງ. ພະເຢຊູເຮັດຕາມຄຳສະເໜີຂອງມານບໍ່? ______________________________

**6** ແຕ່ພະຍາມານມີແຜນການວ່າຈະຈັບຜິດພະອົງໃນປ່ານັ້ນ! ໃນອະນາຄົດພະອົງຈະມີໂອກາດລ້ຽງຄົນຫ້າພັນຄົນໂດຍ ເຮັດການອັດສະຈັນ. ໃນເວລານັ້ນພະອົງຈະຫາເຂົ້າຈີ່ກັບປາໃຫ້ຄົນເຫຼົ່ານັ້ນກິນດ້ວຍເຮັດເປັນການອັດສະຈັນ ພວກເຂົາຫິວແລະເຂົາຕ້ອງການແທ້ໆ ສະນັ້ນພະເຢຊູຕ້ອງຫາໃຫ້ເຂົາ. ດັ່ງນັ້ນການເຮັດເຂົ້າຈີ່ໃຫ້ຄົນທີ່ຫິວຜິດບໍ່? ______________________________

**7** ໃນການອ້ອນວອນຂອງພະເຢຊູ ພະອົງສອນໃຫ້ລູກສິດອ້ອນວອນເພື່ອອາຫານປະຈຳວັນ ການຢາກໄດ້ອາຫານນັ້ນ ຜິດ ຫຼື ບໍ່? ______________________________

> "ດັ່ງນັ້ນ ການຫາອາຫານໃຫ້ບໍ່ຜິດ ແລະການຫິວອາຫານບໍ່ຜິດ ຄວາມຜິດຢູ່ໃສ່? "
> (ບໍ່ຕ້ອງຕອບເທື່ອ)
>
> *ບາງຄົນອາດຈະຄິດດັ່ງຕໍ່ໄປນີ້: ພະເຢຊູຈະເປັນທັງມະນຸດ ທັງພະເຈົ້າດ້ວຍກັນໄດ້ຢ່າງໃດ? ອາດຈະເປັນການທີ່ ພະອົງສະແດງຄວາມອ່ອນແອຂອງມະນຸດ ແຕ່ທີ່ຈິງໃນສະຖານະການໃດທີ່ຈຳເປັນ ພະອົງຈະແກ້ໄຂບັນຫາໄດ້ໂດຍໃຊ້ອຳນາດຂອງພະເຈົ້າ!*

**8** ຖ້າພະເຢຊູຈະເອົາອຳນາດຂອງພະເຈົ້າມາແກ້ບັນຫາໃນສະພາບເປັນມະນຸດ ແລ້ວເຮັດໃຫ້ການເປັນມະນຸດຂອງພະອົງ ຈະເປັນຢ່າງໃດ? (ໃຫ້ໝາຍເອົາຂໍ້ທີ່ເຫັນວ່າຖືກ)

ກ. ງ່າຍກວ່າພວກເຮົາ

ຂ. ຍາກກວ່າພວກເຮົາ

ຄ. ເຊັ່ນດຽວກັນກັບພວກເຮົາ

ຕອບ:

**5** *ກ. 40 ມື້ ຂ. ຈະສັ່ງໃຫ້ກ້ອນຫີນເປັນອາຫານ ຄ. ໄດ້ ງ. ບໍ່*

**6** *ບໍ່*

**7** *ບໍ່*

**8** *ກ.ຖືກ*

**9** ໃນສາມຂໍ້ຕໍ່ໄປນີ້ ຈະແມ່ນຂໍ້ໃດທີ່ບໍ່ຖືກກັບຈຸດປະສົງທີ່ພະເຢຊູມາຮັບສະພາບເປັນມະນຸດ. (ໃຫ້ໝາຍເອົາຂໍ້ທີ່ຖືກ)

ກ. ພະອົງຈະຫາອາຫານມາກິນໃນເວລາພະອົງຫິວເອງ

ຂ. ພະອົງຈະເຮັດການອັດສະຈັນ

ຄ. ພະອົງຈະໃຊ້ອຳນາດພະເຈົ້າມາແກ້ບັນຫາຂອງພະອົງເອງໃນສະພາບເປັນມະນຸດເພື່ອໃຫ້ຕົນເອງສະດວກ.

**10** ສະໄໝນີ້ຄືສະໄໝທີ່ພະເຢຊູເລີ້ມຕົ້ນປ່າວປະກາດພະທຳຂອງພະເຈົ້າ. ຖ້າພະເຢຊູຈະເຮັດຕາມຄຳເວົ້າຂອງພະຍາ ມານ ແມ່ນວ່າພະເຢຊູຈະໃຊ້ອຳນາດພະເຈົ້າມາເພື່ອໃຫ້ການທົດລອງເບົາກວ່າການທົດລອງຂອງມະນຸດຜູ້ອື່ນໆ ແຕ່ທີ່ ຈິງພະເຢຊູທົນການທົດລອງດ້ວຍບໍ່ໃຊ້ອຳນາດໃດ? ____________________________________________

**11** ກ. ການອັດສະຈັນອັນທຳອິດທີ່ພະອົງກະທຳຄືອັນໃດ?

(ອ່ານ ໂຢຮັນ 2:1-11 ແລ້ວໝາຍ √ ແລະ X )

______ ພະອົງເອົາກ້ອນຫີນມາເຮັດອາຫານເພື່ອຄວາມສະບາຍຕົນເອງ

______ ພະອົງເອົານໍ້າມາເຮັດເຫຼົ້າອະງຸ່ນເພື່ອຄວາມສະດວກຂອງຄົນອື່ນ

______ ພະອົງຕັກນໍ້າຈາກນໍ້າສ້າງໃນແຂວງຊາມາເລຍ

ຂ. ການອັດສະຈັນອັນທຳອິດທີ່ພະເຢຊູກະທຳ ສະແດງມາໃນຮູບໃດ ຮູບ ກ ຫຼື ຮູບ ຂ? ___







ຕອບ:

**9** *ຄ.ຖືກ*

**10** *ພະເຈາ*

**11** *ກ. ພະອົງເອົານໍ້າມາເຮັດເຫຼາອະງຸ່ນເພື່ອຄວາມສະດວກຂອງຄົນອື່ນ ຂ. ຮູບ ຂ*

**12** ກ. ຕາມແຜນການຂອງພະຍາມານ ການອັດສະຈັນອັນທຳອິດຂອງພະເຢຊູ ຈະເປັນ
ການເອົາ ________ ມາປ່ຽນ ເປັນ ________ ເພື່ອຄວາມສະດວກຂອງ ________
ຂ. ແຕ່ຕາມແຜນການຂອງພະເຈົ້າ ການອັດສະຈັນອັນທຳອິດຂອງພະເຢຊູຄື:
ເອົາ __________ມາປ່ຽນເປັນ____________ ເພື່ອຄວາມສະດວກຂອງ ________

**13** ໃຫ້ທ່ານປຽບທຽບສະຖານະການທັງສອງຄື: ເມື່ອພະເຢຊູຢູ່ໃນປ່າ ແລະງານສົມລົດ. ພະເຢຊູອົດອາຫານໃນປ່າມາ 40 ມື້, ພະເຢຊູເປັນເຊັ່ນດຽວກັນກັບມະນຸດທຸກຄົນຈວນຈະຕາຍເພາະຢາກເຂົ້າ. ໃນ ງານສົມລົດນັ້ນມີອາຫານຫລວງຫລາຍ ມີບັນຫາປະການດຽວເພາະເຂົາກິນເຫຼົ້າຫຼາຍໂພດຈົນວ່າຫມົດ ແລະບໍ່ພໍຮັບແຂກອີກ. ໃນສອງສະຖານະການນັ້ນ ພະເຢຊູໃຊ້ອຳນາດຂອງພະເຈົ້າໃນບ່ອນໃດ? ______________________________________

**14** ຂໍໃຫ້ຍົກສະເຫນີຄວາມແຕກຕ່າງລະຫວ່າງການທົດລອງຂອງພະເຢຊູໃນປ່າ ແລະການທົດລອງຂອງອາດາມ. ອາດາມ ຖືກການທົດລອງໃຫ້ກິນຫມາກໄມ້ທີ່ພະເຈົ້າຫ້າມ ແຕ່ຍັງມີອາຫານແລະຫມາກໄມ້ທີ່ພະເຈົ້າບໍ່ຫ້າມຢ່າງຫຼວງຫຼາຍ. ພະເຢຊູ ຖືກການທົດລອງຫຼັງຈາກອົດອາຫານ 40 ມື້ ໃນປ່າທະເລຊາຍທີ່ມີແດດຮ້ອນກ້າ.







ກ. ແມ່ນຄົນໃນຮູບໃດທີ່ຕົກໃນການທົດລອງ? ____________________________
ຂ. ຄົນໃນຮູບໃດຊະນະຕໍ່ການທົດລອງ? ________________________________

ຕອບ:

**12** *ກ. ກ້ອນຫີນ....ອາຫານ....ພະອົງເອງ. ຂ. ນ້ຳ...ເຫຼົາອະງຸ່ນ...ຄົນອື່ນ.*

**13** *ໃນງານສົມລົດ*

**14** *ກ. ຮູບ ຂຂ. ຮູບ ກ*

**15** ຕະຫຼອດສາມສະໄຫມທີ່ພະເຢຊູປະກາດພະທຳຂອງພະເຈົ້າ ພະອົງຖືກທົດລອງໃຫ້ຫນີຈາກການພົວພັນກັບສະພາບ ມະນຸດການທົດລອງມາທາງຄວາມປາກເວົ້າຂອງຫຼາຍຄົນ. ໃນຂ້າງຊ້າຍມີລາຍຊື່ຂໍ້ພະຄຳພີຕ່າງໆ ໃນຂ້າງຂວາມີຊື່ເລື່ອງທີ່ວ່າ ດ້ວຍການທົດລອງຂອງພະເຢຊູທ່ານຈົ່ງເອົາຫົວຂໍ້ມາຈັບຄູ່ໃຫ້ຖືກກັບຂໍ້ພະຄຳພີຂ້າງຊ້າຍ.

| | |
|---|---|
| _______ 1. ມທ 3:14 | ກ. ທະຫານໂລມ |
| _______ 2. ມທ 4:3 | ຂ. ໂຢຮັນບັບຕິສະໂຕ |
| _______ 3. ມທ 16:21-23 | ຄ. ເປໂຕ |
| _______ 4. ມທ 26:38-39 | ງ. ຈິດໃຈຂອງພະອົງເອງ |
| _______ 5. ມທ 27:39-40 | ຈ. ຜູ້ຮ້າຍທີ່ຄຶງໄວ້ຄົນຫນຶ່ງ |
| _______ 6. ມທ 27:41-43 | ສ. ພວກນັກທຳ |
| _______ 7. ລູກາ 23:36-37 | ຊ. ພະຍາມານ |
| _______ 8. ລູກາ 23:39 | ຍ. ຄົນທັງປວງ |

**16** ເຮົາຮຽນຮູ້ມາແລ້ວວ່າ ພະເຢຊູຖືກທົດລອງໃຫ້ໃຊ້ອຳນາດໃນສະພາບເປັນພະເຈົ້າສອງເທື່ອ ເທື່ອທຳອິດຢູ່ໃນປ່າແລະ ເທື່ອທີສອງຢູ່ໃສ? ________________________________

**17** ພະວິຫານນັ້ນຢູ່ໃນພູ ວ່າງກາງກຸງເຢລູຊາເລັມ ແລະຫຼັງຄາຂອງພະວິຫານເປັນທີ່ສູງສຸດ. ຄົນຢິວໃນສະໄຫມນັ້ນເຄີຍຖື ວ່າ ພະເມຊີອາຄືກະສັດທີ່ຈະມານັ້ນ ຈະປາກົດມາໃນຫຼັງຄາພະວິຫານແລ້ວຈະໂຕນລົງໂດຍບໍ່ເປັນຫຍັງ ຕໍ່ຫນ້າປະຊາ ຊົນຊາວຢິວ ຖ້າປະຊາຊົນເຫັນເຫດການນັ້ນເຂົາຈະຮັບຮູ້ວ່າເປັນການຂອງພະເມຊີອາ. ໃນການທົດລອງສອງປະການ

ກ. ໃນການທົດລອງສອງປະການນັ້ນ ອັນໃດຈະແກ້ໄຂບັນຫາຂອງພະອົງໃຫ້ຢູ່ສະດວກ?

________________________________________________________________

ຂ. ອັນໃດຈະເຮັດໃຫ້ພະອົງໄດ້ຊື່ສຽງດີ? ____________________________________

**ຕອບ:**

**15** *1. ຖືກກັບ ຂ.* *2. ຖືກກັບ ຊ.*
*3. " ຄ.* *4. " ງ.*
*5. " ຍ.* *6. " ສ.*
*7. " ກ.* *8. " ຈ.*

**16** *ຢູ່ຫຼັງຄາພະວິຫານ*

**17** *ກ. ຢູ່ໃນປ່າ* *ຂ. ຢູ່ຫຼັງຄາພະວິຫານ*

**18** ທຸກເທື່ອທີ່ພະເຢຊູເຮັດການອັດສະຈັນມີຈຸດປະສົງອາດຈະເປັນເພື່ອສັ່ງສອນ ອາດຈະເປັນເພື່ອຊ່ວຍຄົນອື່ນ ແຕ່ພະອົງ ບໍ່ເຄີຍເຮັດການອັດສະຈັນເພື່ອຜົນປະໂຫຍດສ່ວນຕົວຈັກເທື່ອ ຫຼືເພື່ອຈະໃຫ້ໄດ້ອິດທິພົນຄື: ໃນເມື່ອພະເຢຊູໃຫ້ຄົນຂີ້ ທູດດີສະອາດນັ້ນ ຈະເປັນໂອກາດດີທີ່ເຮັດໃຫ້ພະອົງມີຊື່ສຽງ ແຕ່ພະອົງສັ່ງຢ່າງໃດຕໍ່ຄົນຂີ້ທູດ? (ອ່ານ ມທ 8:4)

________________________________________________________

**19** ຫຼາຍເທື່ອພະເຢຊູ ຫ້າມບໍ່ໃຫ້ເວົ້າເລື່ອງການອັດສະຈັນ ຕໍ່ໄປນີ້ມີຕົວຢ່າງ 4 ປະການ ໃຫ້ອ່ານຈາກຂໍ້ພະຄຳພີທີ່ຢູ່ຂ້າງ ຊ້າຍແລະເບິ່ງວ່າຖືກກັບປະໂຫຍກໃດທີ່ຢູ່ຂ້າງຂວາແລ້ວເອົາຫົວຂໍ້ມາຈັບຄູ່ໃຫ້ຖືກ.

| | |
|---|---|
| ______ 1. ມທ 8:4 | ກ. ຄົນຫຼາຍຄົນດີພະຍາດ |
| ______ 2. ມທ 9:27-31 | ຂ. ຄົນຕາບອດສອງຄົນ |
| ______ 3. ມທ 12:15-16 | ຄ. ລູກສາວຂອງຢາອີໂລ |
| ______ 4. ມາລະໂກ 5:42-43 | ງ. ຄົນຂີ້ທູດ |

**20** ໃຫ້ທ່ານອ່ານ ມທ 27:41-43 ອີກ ຈຶ່ງຄິດເບິ່ງດີໆ ການທົດລອງຂອງພະເຢຊູເວລານີ້ຢູ່ໃນທຳນອງໃດ? ໃຫ້ຂີດຂ້າອອກຂໍ້ທີ່ບໍ່ຖືກ.

ກ. ໃຫ້ແກ້ໄຂຄວາມທຸກໃຈໃນສະພາບມະນຸດ ເຊັ່ນດຽວກັນກັບຢູ່ໃນປ່າ.
ຂ. ໃຫ້ມີອິດທິພົນໂດຍໃຊ້ອຳນາດຂອງພະເຈົ້າ ເຊັ່ນດຽວກັບຢູ່ຫຼັງຄາພະວິຫານ.
ຄ. ບໍ່ເໝືອນກັບການອື່ນທຸກປະການ.

**21** ການທົດລອງຂອງພະເຢຊູ ມີຢູ່ສອງຢ່າງຄື:

1. ຈະຫຼີກເວັ້ນຈາກຄວາມທຸກໃນສະພາບມະນຸດ (ຄືໃນປ່າ)
2. ຈະສະແດງກຽດຕິຍົດໃຫ້ມີຊື່ສຽງ (ຄືຢູ່ຫຼັງຄາວິຫານ)

ກ. ການທົດລອງໃນ ມທ 16:1 ເປັນການທົດລອງຢ່າງໃດ? ____________________
ຂ. ການທົດລອງໃນ ມທ 16:21-23 ເປັນການທົດລອງຢ່າງໃດ? ________________

ຕອບ:

**18** *"ຢ່າບອກໃຫ້ຜູ້ໃດຟັງ"*

**19** *1. ຖືກກັບ ງ.* *2. ຖືກກັບ ຂ.*
*3. " ກ.* *4. " ຄ.*

**20** *ຂີດຂ້າອອກແຕ່ຂໍ້ ຄ.*

**21** *ກ. ຢາກມີກຽດຕິຍົດຫຼືຊື່ສຽງ (ຄືກັບຢູ່ຫຼັງຄາພະວິຫານ)*
*ຂ. ຢາກຫຼີກເວັ້ນຈາກສະພາບມະນຸດ (ຄືກັບໃນປ່າ)*

**22** ໃຫ້ທ່ານອ່ານ ຟີລິບປອຍ 2:6-8 ຕອນພະຄຳພີນີ້ເວົ້າເຖິງຄວາມສຳພັນລະຫວ່າງ ສອງສະພາບຂອງພະເຢຊູ. ໃຫ້ທ່ານຂີດຂ້າອອກປະໂຫຍກໃດທີ່ບໍ່ຖືກ.

ກ. ພະເຢຊູຄືພະເຈົ້າ

ຂ. ພເຢຊູຄ້າຍຄືພະເຈົ້າ ແຕ່ຍັງນ້ອຍກວ່າ

ຄ. ພະເຢຊູຍອມສະລະບໍ່ໃຊ້ສິດຂອງພະເຈົ້າ

ງ. ໃນສະພາບເປັນມະນຸດ ພະເຢຊູມີສິດຫຼາຍກວ່າພວກເຮົາ

ຈ. ເຖິງວ່າພະເຢຊູເປັນພະບຸດຂອງພະເຈົ້າຢ່າງສົມບູນກໍຕາມ ແຕ່ໃນສະພາບເປັນມະນຸດພະອົງເຫມືອນຢ່າງກັບເຮົາ ໃນທຸກປະການ.

**23** ໃຫ້ທ່ານຈົດບົດແລະຂໍ້ໃນພະຄຳພີທີ່ອະທິບາຍຢ່າງລະອຽດວ່າ ສອງສະພາບຂອງພະເຢຊູເຂົ້າກັນໄດ້ຢ່າງໃດ? ____________________________________________________

**24** (ຟລປ 2:8) ພະເຢຊູສະລະບໍ່ໃຊ້ອຳນາດຂອງພະເຈົ້າ ຄືຍອມເຊື່ອຟັງຈົນເຖິງຂະໜາດໃດ?

_______________________________________________________________

**25** ພະຍາມານມີຈຸດປະສົງວ່າ ຈະແຍກເອົາສະພາບມະນຸດແລະສະພາບພະເຈົ້າໃນພະອົງອອກຈາກກັນ ແຕ່ພະຍາມານ ບໍ່ຊະນະ. ໃນປ່ານັ້ນພະເຢຊູບໍ່ຍອມໃຊ້ອຳນາດພະເຈົ້າ ເພື່ອຫຼີກເວັ້ນຈາກຄວາມທຸກຝ່າຍ _____________ ແລະຢູ່ເທິງຫຼັງ ຄາພະວິຫານພະອົງບໍ່ໄດ້ຍຶດຖືໂອກາດຊອກຫາກຽດ _______________________________ . (ຕື່ມຄວາມທີ່ຂາດ)

**26** ໃນການທົດລອງ 3 ປະການແມ່ນສອງປະການໃດ ທີ່ພະຍາມານທົດລອງພະອົງໃຫ້ໃຊ້ອຳນາດພະເຈົ້າເພື່ອປະໂຫຍດ ສ່ວນຕົວ? _______________________________________

**27** ໃນພະຄຳພີບົດໃດຂໍ້ໃດເວົ້າເຖິງຄວາມສຳພັນລະຫວ່າງທັງ 2 ສະພາບຂອງພະເຢຊູ? _____

ຕອບ:

***22*** *ຂີດຂ້າອອກຂໍ້ ຂ. ແລະ ງ.*

***23*** *ຟລປ 2:6-8*

***24*** *ຄວາມມໍລະນາ*

***25*** *ມະນຸດ....ຕິຍຶດທີ່ປາສະຈາກພະເຈາ*

***26*** *ຢູ່ໃນປ່າ ແລະ ຢູ່ຫຼັງຄາພະວິຫານ*

***27*** *ຟລປ 2:6-8*

**28** ໃນຄຳເວົ້າ 4 ປະການຕໍ່ໄປນີ້ໃຫ້ທ່ານຂີດຂ້າອອກຄວາມໃດທີ່ບໍ່ຖືກ.

ກ. ພະເຢຊູຖືກການທົດລອງເຊັ່ນດຽວກັບພວກເຮົາ ຕ່າງແຕ່ປະການດຽວວ່າເມື່ອມີການສຸກເສີນພະເຢຊູຈຶ່ງໃຊ້ອຳນາດ ຂອງພະເຈົ້າ.

ຂ. ພະເຢຊູຖືກການທົດລອງເບົາກວ່າພວກເຮົາ ເພາະເປັນພະບຸດຂອງພະເຈົ້າດ້ວຍ ແລ້ວສຳນຶກການທົດລອງບໍ່ປານ ພວກເຮົາ.

ຄ. ຖືກການທົດລອງເຊັ່ນດຽວກັນກັບພວກເຮົາ ເພາະພະອົງບໍ່ສາມາດໃຊ້ອຳນາດພະເຈົ້າ.

ງ. ເຊັ່ນດຽວກັນກັບເຮົາ ຫຼືອາດຈະຫນັກກວ່າເຮົາອີກ ເພາະມີການທົດລອງຄືເຮົາທຸກປະການ ແລ້ວຍິ່ງກວ່ານັ້ນອີກ ພະຍາມານທົດລອງໃຫ້ໃຊ້ອຳນາດພະເຈົ້າດ້ວຍ.

**29** ໃນເຮັບເລີ 4:15 ພະອົງຊົງຖືກທົດລອງຢ່າງເຮົາໃນຈັກປະການ? ____________________

**30** ໃຫ້ທ່ານຂຽນຄຳທີ່ຈະອະທິບາຍ ຟລປ 2:6-8 ຢ່າງງ່າຍໆ ວ່າ ພະເຢຊູຜູ້ຊຶ່ງປະກອບດ້ວຍທັງສະພາບມະນຸດ ແລະ ສະພາບພະເຈົ້າໃນຕົວພະອົງເອງຍັງຈະຖືກການທົດລອງເຊັ່ນດຽວກັບເຮົາໄດ້ ໃຫ້ຍົກຕົວຢ່າງເຫມືອນກັນ: ____________________________________________

________________________________________________________________

________________________________________________________________

________________________________________________________________

**31** (ອ່ານ ເຮັບເລີ 2:18) ພະອົງຊົງທົນທຸກທໍລະມານແລະຖືກທົດລອງຢ່າງຫນັກເພື່ອຈຸດປະສົງຢ່າງໃດ? ______________________________________________________

________________________________________________________________

| |
|---|
| ບາດນີ້ທ່ານຈະສາມາດຕອບຄຳຖາມໃນຫນ້າປົກບົດນີ້ບໍ່? ໃຫ້ກັບໄປອ່ານເບິ່ງ - ອາດຈະສົນທະນາເລື່ອງ ຄຳຖາມໃນປະຊຸມຕໍ່ໄປ. ໃນບົດຫນ້າເຮົາຈະຮຽນກ່ຽວກັບການຖືກທົດລອງຂອງພະເຢຊູໃນສະພາບມະນຸດ. |

*ຢ່າລືມບົດເສັງ*

ຕອບ:

***28*** *ຂີດຂ້າອອກຂໍ້ ກ. ຂ. ແລະ ຄ.*

***29*** *ທຸກປະການ*

***30*** *ບໍ່ມີຄຳຕອບຕາຍຕົວ ໃຫ້ປຽບທຽບຄຳຕອບຊຶ່ງກັນແລະກັນໃນທີ່ປະຊຸມ*

***31*** *ເພື່ອສາມາດຊ່ອຍຜູ້ທີ່ກຳລັງຖືກທົດລອງ*